**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງອຸດສາຫະກໍາ ແລະ ການຄ້າ ເລກທີ 1339 /ອຄ

ນະຄອນຫຼວງວຽງຈັນ, ວັນທີ 13 ພຶດສະພາ 2026

# ຂໍ້ຕົກລົງ
# ວ່າດ້ວຍທຸລະກິດແກັສຫຸງຕົ້ມ

- ອີງຕາມ ກົດໝາຍ ວ່າດ້ວຍວິສາຫະກິດ ສະບັບເລກທີ 33/ສພຊ, ລົງວັນທີ 29 ທັນວາ 2022;
- ອີງຕາມ ດໍາລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງອຸດສາຫະກໍາແລະການຄ້າ ສະບັບເລກທີ 550/ນຍ, ລົງວັນທີ 01 ກັນຍາ 2025;
- ອີງຕາມ ໜັງສືສະເໜີຂອງກົມການຄ້າພາຍໃນ ສະບັບເລກທີ 0687/ກຄພນ.05, ລົງວັນທີ 27 ເມສາ 2026.

**ລັດຖະມົນຕີ ກະຊວງອຸດສາຫະກໍາ ແລະ ການຄ້າ ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກໍານົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບວຽກງານຄຸ້ມຄອງ ແລະ ຕິດຕາມ ກວດກາ ການດໍາເນີນທຸລະກິດແກັສຫຸງຕົ້ມ ເພື່ອເຮັດໃຫ້ການດໍາເນີນທຸລະກິດດັ່ງກ່າວ ຖືກຕ້ອງສອດຄ່ອງກັບກົດໝາຍ ແລະ ລະບຽບການ ແນໃສ່ປົກປ້ອງສິດ ແລະ ຜົນປະໂຫຍດຂອງລັດ, ຜູ້ດໍາເນີນທຸລະກິດ ແລະ ຜູ້ຊົມໃຊ້ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ.

**ມາດຕາ 2 ທຸລະກິດແກັສຫຸງຕົ້ມ**

ທຸລະກິດແກັສຫຸງຕົ້ມ ແມ່ນການດໍາເນີນທຸລະກິດ ນໍາເຂົ້າ ແລະ ຈໍາໜ່າຍ ແກັສຫຸງຕົ້ມ.

**ມາດຕາ 3 ອະທິບາຍຄໍາສັບ**

ຄໍາສັບທີ່ນໍາໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ແກັສຫຸງຕົ້ມ** ໝາຍເຖິງ ເຊື້ອໄຟສໍາເລັດຮູບປະເພດໜຶ່ງ ທີ່ໃຫ້ຄວາມຮ້ອນເໝາະແກ່ການນໍາໃຊ້ ໃນຄົວເຮືອນ ແລະ ອຸດສາຫະກໍາຕ່າງໆ ໂດຍແຍກເປັນຊະນິດ ຕາມທີ່ກໍານົດໃນມາດຕະຖານແຫ່ງຊາດ;
2. **ສາງແກັສຫຸງຕົ້ມ** ໝາຍເຖິງ ສະຖານທີ່ສະເພາະທີ່ຖືກອອກແບບ ແລະ ສ້າງຂຶ້ນຕາມ ມາດຕະຖານເຕັກນິກ ເພື່ອໃຊ້ສໍາລັບການຮັບ, ເກັບຮັກສາ, ຄ່ຽນຖ່າຍໃສ່ຖັງ ແລະ ແຈກຢາຍອາຍແກັສ ຫຸງຕົ້ມ ເພື່ອສະໜອງໃຫ້ແກ່ສັງຄົມ;
3. **ຖັງແກັສຫຸງຕົ້ມ** ໝາຍເຖິງ ພາຊະນະບັນຈຸແກັສຫຸງຕົ້ມ ທີ່ມີຂະໜາດບັນຈຸບໍ່ເກີນ 48 ກິໂລກຣາມ/ຖັງ;
4. **ຄອນອັດຖັງແກັສຫຸງຕົ້ມ** ໝາຍເຖິງ ອຸປະກອນປະກອບເຂົ້າໃນການປິດປາກຖັງແກັສຫຸງຕົ້ມ ກ່ອນການຈໍາໜ່າຍ;

5. **ສີຂອງຖັງແກັສຫຸງຕົ້ມ** ໝາຍເຖິງ ສີສະເພາະໃດໜຶ່ງ ທີ່ບໍລິສັດນຳເຂົ້າແກັສຫຸງຕົ້ມກຳນົດຂຶ້ນມາເພື່ອນຳໃຊ້ຈຳແນກຖັງແກັສຫຸງຕົ້ມຂອງຕົນ.

6. **ເຄື່ອງໝາຍການຄ້າ** ໝາຍເຖິງ ສັນຍາລັກໃດໜຶ່ງທີ່ໄດ້ຈົດທະບຽນເຄື່ອງໝາຍການຄ້າ.

**ມາດຕາ 4 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ດຳເນີນທຸລະກິດແກັສຫຸງຕົ້ມ ຢູ່ ສປປ ລາວ.

## ໝວດທີ 2
## ການດຳເນີນທຸລະກິດນຳເຂົ້າແກັສຫຸງຕົ້ມ

**ມາດຕາ 5 ການດຳເນີນທຸລະກິດນຳເຂົ້າແກັສຫຸງຕົ້ມ**

ການດຳເນີນທຸລະກິດນຳເຂົ້າແກັສຫຸງຕົ້ມ ແມ່ນການນຳເຂົ້າແກັສຫຸງຕົ້ມ ເພື່ອກ່ຽມຖ່າຍໃສ່ຖັງແກັສຫຸງຕົ້ມ ແລະ ຂາຍຍົກ ໃຫ້ແກ່ທຸລະກິດຈຳໜ່າຍແກັສຫຸງຕົ້ມ ຫຼື ໂຮງງານອຸດສາຫະກຳປຸງແຕ່ງ.

**ມາດຕາ 6 ເງື່ອນໄຂການຂໍອະນຸຍາດດຳເນີນທຸລະກິດນຳເຂົ້າແກັສຫຸງຕົ້ມ**

ການຂໍອະນຸຍາດດຳເນີນທຸລະກິດນຳເຂົ້າແກັສຫຸງຕົ້ມ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ໃບທະບຽນວິສາຫະກິດ ໃນຮູບແບບບໍລິສັດ;
2. ທຶນຈົດທະບຽນ ຕາມແຕ່ລະຮູບການ ການລົງທຶນ ຄື:
   1) ວິສາຫະກິດຂອງຄົນລາວ ຕ້ອງມີທຶນຈົດທະບຽນວິສາຫະກິດ ສາມຕື້ກີບຂຶ້ນໄປ;
   2) ວິສາຫະກິດຂອງຄົນລາວ ຮ່ວມທຶນກັບຄົນຕ່າງປະເທດ ຕ້ອງມີທຶນຈົດທະບຽນວິສາຫະກິດ ຫ້າຕື້ກີບຂຶ້ນໄປ, ໂດຍຄົນລາວຕ້ອງຖືຮຸ້ນ ບໍ່ຫຼຸດສາມສິບສ່ວນຮ້ອຍຂອງທຶນຈົດທະບຽນດັ່ງກ່າວ;
   3) ວິສາຫະກິດຂອງຄົນຕ່າງປະເທດ ລົງທຶນຮ້ອຍສ່ວນຮ້ອຍ ຕ້ອງມີທຶນຈົດທະບຽນວິສາຫະກິດ ສິບຕື້ກີບຂຶ້ນໄປ.
3. ບັນຊີເງິນຝາກຢ່າງໜ້ອຍ ສາມສິບສ່ວນຮ້ອຍ ຂອງທຶນຈົດທະບຽນວິສາຫະກິດ ຢູ່ທະນາຄານທຸລະກິດທີ່ຕັ້ງຢູ່ ສປປ ລາວ;
4. ສາງແກັສຫຸງຕົ້ມທີ່ສາມາດບັນຈຸແກັສຫຸງຕົ້ມ ແຕ່ສິບຫ້າພັນ ກິໂລກຣາມຂຶ້ນໄປ ຕາມມາດຕະຖານການປຸກສ້າງ ທີ່ໄດ້ຮັບອະນຸຍາດຈາກຂະແໜງໂຍທາທິການ ແລະ ຂົນສົ່ງ;
5. ເຄື່ອງໝາຍການຄ້າເປັນຂອງຕົນເອງ ທີ່ໄດ້ຮັບການຈົດທະບຽນເຄື່ອງໝາຍການຄ້າ;
6. ຖັງແກັສຫຸງຕົ້ມ ຕ້ອງໄດ້ຮັບການຢັ້ງຢືນການນຳໃຊ້ສີ, ດອນອັດຖັງແກັສຫຸງຕົ້ມ ແລະ ການຕິດສະຫຼາກສິນຄ້າເປັນພາສາລາວ ຈາກກົມການຄ້າພາຍໃນ;
7. ລົດຂົນສົ່ງຖັງແກັສ ຖືກຕ້ອງຕາມມາດຕະຖານເຕັກນິກ ແລະ ໄດ້ຮັບອະນຸຍາດຈາກຂະແໜງໂຍທາທິການ ແລະ ຂົນສົ່ງ.

**ມາດຕາ 7 ການຂໍອະນຸຍາດດຳເນີນທຸລະກິດນຳເຂົ້າແກັສຫຸງຕົ້ມ**

ບຸກຄົນ, ນິຕິບຸກຄົນ ທີ່ມີຈຸດປະສົງ ດຳເນີນທຸລະກິດນຳເຂົ້າແກັສຫຸງຕົ້ມ ໃຫ້ຍື່ນຄຳຮ້ອງຕໍ່ຂະແໜງອຸດສາຫະກຳ ແລະ ການຄ້າ, ຊຶ່ງຕ້ອງປະກອບເອກະສານ ດັ່ງນີ້:

1. ຄຳຮ້ອງ ຕາມແບບພິມຂອງກົມການຄ້າພາຍໃນ;
2. ສຳເນົາໃບທະບຽນວິສາຫະກິດ;
3. ສັນຍາຊື້-ຂາຍ ກັບຜູ້ສະໜອງແກັສຢູ່ຕ່າງປະເທດ;
4. ສຳເນົາໃບຢັ້ງຢືນຄວາມຖືກຕ້ອງການປຸກສ້າງສາງແກັສຫຸງຕົ້ມ;

5. ສຳເນົາໃບຢັ້ງຢືນມາດຕະຖານປ້ອງກັນອັກຄີໄພ;
6. ສຳເນົາໃບຢັ້ງຢືນການນຳໃຊ້ສີ ແລະ ດອນອັດຖັງແກັສຫຸງຕົ້ມ;
7. ສຳເນົາໃບຢັ້ງຢືນເນື້ອໃນສະຫຼາກສິນຄ້າເປັນພາສາລາວ;
8. ສຳເນົາໃບຢັ້ງຢືນການກວດສອບຄຸນນະພາບຄວາມປອດໄພ ແລະ ບໍລິມາດຖັງແກັສຫຸງຕົ້ມ;
9. ສຳເນົາໃບຢັ້ງຢືນທີ່ຕັ້ງຂອງສາງແກັສຫຸງຕົ້ມ;
10. ສຳເນົາໃບຢັ້ງຢືນການຈົດທະບຽນເຄື່ອງໝາຍການຄ້າ;
11. ສະຫຼູບບັນຊີຊັບສິນ.

**ມາດຕາ 8 ການພິຈາລະນາອອກໃບອະນຸຍາດດຳເນີນທຸລະກິດນຳເຂົ້າແກັສຫຸງຕົ້ມ**

ພາຍຫຼັງທີ່ໄດ້ຮັບເອກະສານຄົບຖ້ວນ ແລະ ຖືກຕ້ອງແລ້ວ, ຂະແໜງອຸດສາຫະກຳ ແລະ ການຄ້າ ຕ້ອງພິຈາລະນາອອກໃບອະນຸຍາດດຳເນີນທຸລະກິດນຳເຂົ້າແກັສຫຸງຕົ້ມ ພາຍໃນ ສິບວັນລັດຖະການ ນັບແຕ່ວັນທີ່ໄດ້ຮັບເອກະສານເປັນຕົ້ນໄປ.

ກໍລະນີເອກະສານບໍ່ຖືກຕ້ອງ ແລະ ບໍ່ຄົບຖ້ວນ ຕ້ອງແຈ້ງໃຫ້ຜູ້ຍື່ນຄຳຮ້ອງຊາບ ພາຍໃນ ຫ້າວັນ ລັດຖະການ ນັບແຕ່ວັນທີ່ໄດ້ຮັບເອກະສານເປັນຕົ້ນໄປເພື່ອປັບປຸງແກ້ໄຂ.

ກໍລະນີບໍ່ສາມາດອອກໃບອະນຸຍາດດຳເນີນທຸລະກິດນຳເຂົ້າແກັສຫຸງຕົ້ມ ຕ້ອງແຈ້ງເຫດຜົນເປັນລາຍລັກອັກສອນ ໃຫ້ຜູ້ທີ່ຍື່ນຄຳຮ້ອງຊາບ ພາຍໃນ ສິບວັນລັດຖະການ ນັບແຕ່ວັນທີ່ໄດ້ຮັບເອກະສານເປັນຕົ້ນໄປ.

**ມາດຕາ 9 ອາຍຸໃບອະນຸຍາດດຳເນີນທຸລະກິດນຳເຂົ້າແກັສຫຸງຕົ້ມ**

ໃບອະນຸຍາດດຳເນີນທຸລະກິດນຳເຂົ້າແກັສຫຸງຕົ້ມ ມີອາຍຸການນຳໃຊ້ ສາມປີ ແລະ ສາມາດຕໍ່ໄດ້.

ຜູ້ດຳເນີນທຸລະກິດນຳເຂົ້າແກັສຫຸງຕົ້ມ ທີ່ມີຈຸດປະສົງຂໍຕໍ່ອາຍຸໃບອະນຸຍາດທຸລະກິດນຳເຂົ້າແກັສຫຸງຕົ້ມ ໃຫ້ຍື່ນຄຳຮ້ອງຕໍ່ກົມການຄ້າພາຍໃນ ຢ່າງໜ້ອຍ ສາມສິບວັນ ກ່ອນວັນໝົດອາຍຸການນຳໃຊ້ ໂດຍປະກອບເອກະສານ ດັ່ງນີ້:

1. ຄຳຮ້ອງ ຕາມແບບພິມຂອງກົມການຄ້າພາຍໃນ;
2. ໃບອະນຸຍາດດຳເນີນທຸລະກິດນຳເຂົ້າແກັສຫຸງຕົ້ມ ສະບັບຕົ້ນ;
3. ສຳເນົາໃບຢັ້ງຢືນການມອບພັນທະອາກອນ ປະຈຳປີ;
4. ເອກະສານຢັ້ງຢືນຖານະການເງິນຈາກທະນາຄານແຫ່ງ ສປປ ລາວ ຫຼື ທະນາຄານທຸລະກິດ ທີ່ຕັ້ງຢູ່ ສປປ ລາວ ແລະ ການຢັ້ງຢືນດັ່ງກ່າວ ຕ້ອງມີການເຄື່ອນໄຫວຢ່າງຕ່ຳ ຫົກເດືອນ;
5. ສະຫຼູບການນຳເຂົ້າ ແລະ ການຈຳໜ່າຍແກັສຫຸງຕົ້ມ ແຕ່ວັນທີ່ໄດ້ຮັບອະນຸຍາດທຸລະກິດນຳເຂົ້າແກັສຫຸງຕົ້ມ ຈົນຮອດວັນຂໍຕໍ່ອາຍຸ;
6. ສະຫຼູບບັນຊີຊັບສິນ.

## ໝວດທີ 3
## ການດຳເນີນທຸລະກິດຈຳໜ່າຍແກັສຫຸງຕົ້ມ

**ມາດຕາ 10 ການດຳເນີນທຸລະກິດຈຳໜ່າຍແກັສຫຸງຕົ້ມ**

ການດຳເນີນທຸລະກິດຈຳໜ່າຍແກັສຫຸງຕົ້ມ ແມ່ນການຈຳໜ່າຍແກັສຫຸງຕົ້ມ ທີ່ໄດ້ຮັບການສະໜອງຈາກບໍລິສັດ ທີ່ດຳເນີນທຸລະກິດນຳເຂົ້າແກັສຫຸງຕົ້ມ ເພື່ອຂາຍຍ່ອຍໃຫ້ແກ່ຜູ້ຊົມໃຊ້ໂດຍກົງ.

**ມາດຕາ 11 ເງື່ອນໄຂການຂໍອະນຸຍາດດຳເນີນທຸລະກິດຈຳໜ່າຍແກັສຫຸງຕົ້ມ**

ການດຳເນີນທຸລະກິດຈຳໜ່າຍແກັສຫຸງຕົ້ມ ຕ້ອງມີເງື່ອນ ດັ່ງນີ້:

1. ໃບທະບຽນວິສາຫະກິດ ຖືກຕ້ອງຕາມກົດໝາຍວ່າດ້ວຍວິສາຫະກິດ;



ລ/ນ

2. ທຶນຈົດທະບຽນ ຕາມແຕ່ລະຮູບການ ການລົງທຶນ ຄື:

   1) ວິສາຫະກິດຂອງຄົນລາວ ຕ້ອງມີທຶນຈົດທະບຽນວິສາຫະກິດ ສາມຮ້ອຍລ້ານກີບຂຶ້ນໄປ;

   2) ວິສາຫະກິດຂອງຄົນລາວ ຮ່ວມທຶນກັບຄົນຕ່າງປະເທດ ຕ້ອງມີທຶນຈົດທະບຽນວິສາຫະກິດ ຫ້າຮ້ອຍລ້ານກີບຂຶ້ນໄປ, ໂດຍຄົນລາວຕ້ອງຖືຮຸ້ນ ບໍ່ຫຼຸດສາມສິບສ່ວນຮ້ອຍຂອງທຶນຈົດທະບຽນດັ່ງກ່າວ;

   3) ວິສາຫະກິດຂອງຄົນຕ່າງປະເທດ ລົງທຶນຮ້ອຍສ່ວນຮ້ອຍ ຕ້ອງມີທຶນຈົດທະບຽນວິສາຫະກິດ ໜຶ່ງຕື້ກີບຂຶ້ນໄປ.

3. ບັນຊີເງິນຝາກຢ່າງໜ້ອຍ ສາມສິບສ່ວນຮ້ອຍ ຂອງທຶນຈົດທະບຽນວິສາຫະກິດ ຢູ່ທະນາຄານທຸລະກິດທີ່ຕັ້ງຢູ່ ສປປ ລາວ;

4. ສະຖານທີ່ຕັ້ງຂອງຮ້ານຈຳໜ່າຍ ຄື:

   1) ສະຖານທີ່ຕັ້ງຫ່າງຈາກອາຄານອື່ນ ຫົກແມັດຂຶ້ນໄປ ສາມາດເກັບມ້ຽນຖັງແກັສຫຸງຕົ້ມໄດ້ບໍ່ໃຫ້ເກີນ 1,500 ກິໂລກຣາມ ຕໍ່ໜຶ່ງຮ້ານ;

   2) ກໍລະນີ ສະຖານທີ່ຕັ້ງຫ່າງຈາກອາຄານອື່ນ ຫົກແມັດລົງມາ ສາມາດເກັບມ້ຽນຖັງແກັສຫຸງຕົ້ມໄດ້ບໍ່ໃຫ້ເກີນ 700 ກິໂລກຣາມ ຕໍ່ໜຶ່ງຮ້ານ ແລະ ໄດ້ຮັບການເຫັນດີຈາກເຈົ້າຂອງສິດນຳໃຊ້ສະຖານທີ່ອ້ອມຂ້າງ;

   3) ອຸປະກອນ, ລະບົບປ້ອງກັນອັກຄີໄພ ແລະ ເຄື່ອງສັນຍານເຕືອນໄພ ເພື່ອໄວ້ແຈ້ງເຕືອນໃນເວລາແກັສຮົ່ວໄຫຼ ຕາມມາດຕະຖານປ້ອງກັນອັກຄີໄພ ທີ່ໄດ້ຮັບອະນຸຍາດຈາກຂະແໜງປ້ອງກັນຄວາມສະຫງົບ;

5. ມີລົດຂົນສົ່ງຖັງແກັສຫຸງຕົ້ມ ທີ່ຮັບປະກັນຄວາມປອດໄພ;

6. ປະກັນໄພຄຸ້ມຄອງອັກຄີໄພ.

## ມາດຕາ 12 ການຂໍອະນຸຍາດດຳເນີນທຸລະກິດຮ້ານຈຳໜ່າຍແກັສຫຸງຕົ້ມ

ບຸກຄົນ, ນິຕິບຸກຄົນ ທີ່ມີຈຸດປະສົງດຳເນີນທຸລະກິດຈຳໜ່າຍແກັສຫຸງຕົ້ມ ໃຫ້ຍື່ນຄຳຮ້ອງຕໍ່ຂະແໜງອຸດສາຫະກຳ ແລະ ການຄ້າ, ຊຶ່ງຕ້ອງປະກອບເອກະສານ ດັ່ງນີ້:

1. ຄຳຮ້ອງ ຕາມແບບພິມຂອງກົມການຄ້າພາຍໃນ;
2. ສຳເນົາໃບທະບຽນວິສາຫະກິດ;
3. ສຳເນົາ ສັນຍາຊື້-ຂາຍ ແລະ ສັນຍາເປັນຕົວແທນ (ໃນກໍລະນີເປັນຕົວແທນ) ຈຳໜ່າຍແກັສຫຸງຕົ້ມຈາກຜູ້ດຳເນີນທຸລະກິດນຳເຂົ້າແກັສຫຸງຕົ້ມ;
4. ສຳເນົາໃບຢັ້ງຢືນມາດຕະຖານປ້ອງກັນອັກຄີໄພ ຈາກຂະແໜງປ້ອງກັນຄວາມສະຫງົບ;
5. ສຳເນົາໃບຢັ້ງຢືນທີ່ຕັ້ງວິສາຫະກິດຈຳໜ່າຍແກັສຫຸງຕົ້ມ ສຳລັບສະຖານທີ່ຕັ້ງຫ່າງຈາກອາຄານອື່ນ ອາຄານອື່ນ ຫົກແມັດຂຶ້ນໄປ;
6. ສຳເນົາເອກະສານຢັ້ງຢືນສິດນຳໃຊ້ສະຖານທີ່ ແລະ ເອກະສານຢັ້ງຢືນການເຫັນດີຈາກເຈົ້າຂອງສິດນຳໃຊ້ສະຖານທີ່ອ້ອມຂ້າງ ສຳລັບສະຖານທີ່ຕັ້ງຫ່າງຈາກອາຄານອື່ນ ຫົກແມັດລົງມາ;
7. ສຳເນົາໃບປະກັນຄຸ້ມຄອງອັກຄີໄພ ສຳລັບບຸກຄົນທີສາມ;
8. ສຳເນົາໃບຢັ້ງຢືນຄວາມຖືກຕ້ອງປຸກສ້າງຮ້ານຈຳໜ່າຍແກັສຫຸງຕົ້ມ ຈາກຂະແໜງໂຍທາທິການ ແລະ ຂົນສົ່ງ.

## ມາດຕາ 13 ການພິຈາລະນາອອກໃບອະນຸຍາດດຳເນີນທຸລະກິດຈຳໜ່າຍແກັສຫຸງຕົ້ມ

ພາຍຫຼັງທີ່ໄດ້ຮັບເອກະສານຄົບຖ້ວນ ແລະ ຖືກຕ້ອງແລ້ວ, ຂະແໜງອຸດສາຫະກຳ ແລະ ການຄ້າ ຕ້ອງພິຈາລະນາອອກໃບອະນຸຍາດດຳເນີນທຸລະກິດຈຳໜ່າຍແກັສຫຸງຕົ້ມ ພາຍໃນ ສິບວັນລັດຖະການ ນັບແຕ່ວັນທີ່ໄດ້ຮັບເອກະສານເປັນຕົ້ນໄປ.

ກໍລະນີເອກະສານບໍ່ຖືກຕ້ອງ ແລະ ບໍ່ຄົບຖ້ວນ ຕ້ອງແຈ້ງໃຫ້ຜູ້ຍື່ນຄໍາຮ້ອງຊາບ ພາຍໃນ ຫ້າວັນລັດຖະການ ນັບແຕ່ວັນທີ່ໄດ້ຮັບເອກະສານເປັນຕົ້ນໄປເພື່ອປັບປຸງແກ້ໄຂ.

ກໍລະນີບໍ່ສາມາດອອກໃບອະນຸຍາດດໍາເນີນທຸລະກິດຈໍາໜ່າຍແກ໊ສຫຸງຕົ້ມ ຕ້ອງແຈ້ງເຫດຜົນເປັນລາຍລັກອັກສອນໃຫ້ຜູ້ຍື່ນຄໍາຮ້ອງຊາບ ພາຍໃນ ສິບວັນລັດຖະການ ນັບແຕ່ວັນທີ່ໄດ້ຮັບເອກະສານເປັນຕົ້ນໄປ.

### ມາດຕາ 14 ອາຍຸໃບອະນຸຍາດດໍາເນີນທຸລະກິດຮ້ານຈໍາໜ່າຍແກ໊ສຫຸງຕົ້ມ

ໃບອະນຸຍາດດໍາເນີນທຸລະກິດຈໍາໜ່າຍແກ໊ສຫຸງຕົ້ມ ມີອາຍຸການນໍາໃຊ້ ສອງປີ ແລະ ສາມາດຕໍ່ໄດ້.

ຜູ້ດໍາເນີນທຸລະກິດຈໍາໜ່າຍແກ໊ສຫຸງຕົ້ມ ທີ່ມີຈຸດປະສົງຂໍຕໍ່ອາຍຸໃບອະນຸຍາດດໍາເນີນທຸລະກິດຈໍາໜ່າຍແກ໊ສຫຸງຕົ້ມ ໃຫ້ຍື່ນຄໍາຮ້ອງຕໍ່ຂະແໜງອຸດສາຫະກໍາ ແລະ ການຄ້າ ຢ່າງໜ້ອຍສິບຫ້າວັນ ກ່ອນວັນໝົດອາຍຸການນໍາໃຊ້ ໂດຍປະກອບເອກະສານ ດັ່ງນີ້:

1. ຄໍາຮ້ອງ ຕາມແບບພິມຂອງກົມການຄ້າພາຍໃນ;
2. ໃບອະນຸຍາດດໍາເນີນທຸລະກິດຮ້ານຈໍາໜ່າຍແກ໊ສຫຸງຕົ້ມ ສະບັບຕົ້ນ;
3. ບົດສະຫຼຸບບັນຊີການເງິນ ປະຈໍາປີ;
4. ເອກະສານຢັ້ງຢືນການມອບພັນທະອາກອນ ປະຈໍາປີ.

## ໝວດທີ 4
## ການໂຈະ ແລະ ຍົກເລີກໃບອະນຸຍາດດໍາເນີນທຸລະກິດແກ໊ສຫຸງຕົ້ມ

### ມາດຕາ 15 ການໂຈະໃບອະນຸຍາດດໍາເນີນທຸລະກິດແກ໊ສຫຸງຕົ້ມ

ໃບອະນຸຍາດດໍາເນີນທຸລະກິດແກ໊ສຫຸງຕົ້ມ ຈະຖືກໂຈະ ຕາມແຕ່ລະກໍລະນີ ດັ່ງນີ້:

1. ສະເໜີໂຈະດ້ວຍຄວາມສະໝັກໃຈ ຂອງຜູ້ດໍາເນີນທຸລະກິດແກ໊ສຫຸງຕົ້ມ;
2. ດໍາເນີນທຸລະກິດ ບໍ່ຖືກຕ້ອງສອດຄ່ອງຕາມຂອບເຂດທີ່ໄດ້ຮັບອະນຸຍາດ;
3. ລະເມີດລະບຽບການ ກ່ຽວກັບການດໍາເນີນທຸລະກິດນໍາເຂົ້າ ແລະ ຈໍາໜ່າຍ ແກ໊ສຫຸງຕົ້ມ;
4. ໂຈະພາຍຫຼັງທີ່ໄດ້ມີການກ່າວເຕືອນເປັນລາຍລັກອັກສອນ ຊຶ່ງຜູ້ດໍາເນີນທຸລະກິດຕ້ອງປັບປຸງແກ້ໄຂຂໍ້ຄົງຄ້າງພາຍຫຼັງທີ່ຖືກສັ່ງໂຈະ ພາຍໃນ ສາມເດືອນ ນັບແຕ່ວັນທີ່ໄດ້ແຈ້ງໂຈະເປັນຕົ້ນໄປ;
5. ນໍາໃຊ້ໃບອະນຸຍາດດໍາເນີນທຸລະກິດແກ໊ສຫຸງຕົ້ມ ທີ່ໝົດອາຍຸ.

### ມາດຕາ 16 ການຍົກເລີກໃບອະນຸຍາດດໍາເນີນທຸລະກິດແກ໊ສຫຸງຕົ້ມ

ໃບອະນຸຍາດດໍາເນີນທຸລະກິດແກ໊ສຫຸງຕົ້ມ ຈະຖືກຍົກເລີກ ຕາມແຕ່ລະກໍລະນີ ດັ່ງນີ້:

1. ການສະເໜີຍົກເລີກດ້ວຍຄວາມສະໝັກໃຈ ຂອງຜູ້ດໍາເນີນທຸລະກິດແກ໊ສຫຸງຕົ້ມ;
2. ລະເມີດລະບຽບການ ກ່ຽວກັບການດໍາເນີນທຸລະກິດນໍາເຂົ້າ ແລະ ຈໍາໜ່າຍ ແກ໊ສຫຸງຕົ້ມ;
3. ມີການສະເໜີຢຸດເຊົາການດໍາເນີນທຸລະກິດແກ໊ສຫຸງຕົ້ມ ໂດຍຜູ້ດໍາເນີນທຸລະກິດແກ໊ສຫຸງຕົ້ມ;
4. ບໍ່ປັບປຸງແກ້ໄຂຂໍ້ຄົງຄ້າງ ພາຍໃນກໍານົດເວລາ ສາມເດືອນ ພາຍຫຼັງທີ່ຖືກສັ່ງໂຈະ;
5. ຍັງສືບຕໍ່ເຄື່ອນໄຫວດໍາເນີນທຸລະກິດ ໃນເວລາທີ່ຖືກສັ່ງໂຈະ;
6. ມີຄໍາຕັດສິນຈາກສານປະຊາຊົນ ໃຫ້ຢຸດເຊົາການດໍາເນີນທຸລະກິດ.

## ໝວດທີ 5
## ສິດ ແລະ ພັນທະ ຂອງຜູ້ດໍາເນີນທຸລະກິດແກ໊ສຫຸງຕົ້ມ

### ມາດຕາ 17 ສິດຂອງຜູ້ດໍາເນີນທຸລະກິດນໍາເຂົ້າແກ໊ສຫຸງຕົ້ມ

ຜູ້ດໍາເນີນທຸລະກິດນໍາເຂົ້າແກ໊ສຫຸງຕົ້ມ ມີສິດ ດັ່ງນີ້:

1. ດໍາເນີນທຸລະກິດນໍາເຂົ້າແກ໊ສຫຸງຕົ້ມ ຕາມຂອບເຂດທີ່ໄດ້ຮັບອະນຸຍາດ;
2. ໄດ້ຮັບຂໍ້ມູນຂ່າວສານ ກ່ຽວກັບການນໍາເຂົ້າ-ສົ່ງອອກ ແກ໊ສຫຸງຕົ້ມ;

3. ນຳເຂົ້າແກ໊ສຫຸງຕົ້ມຈາກຜູ້ສະໜອງຕ່າງປະເທດ ຕາມທີ່ໄດ້ຮັບອະນຸຍາດ;
4. ສະໜອງແກ໊ສຫຸງຕົ້ມ ໃຫ້ແກ່ທຸລະກິດຈຳໜ່າຍແກ໊ສຫຸງຕົ້ມ ຫຼື ໂຮງງານອຸດສາຫະກຳປຸງແຕ່ງຕ່າງໆ;
5. ນຳເຂົ້າຖັງແກ໊ສຫຸງຕົ້ມເປົ່າ ເພື່ອຕິດເຄື່ອງໝາຍການຄ້າ ຫຼື ສັນຍາລັກບໍລິສັດຂອງຕົນ;
6. ໄດ້ຮັບການຢັ້ງຢືນການກວດສອບດ້ານມາດຕະຖານ, ຄຸນນະພາບ ແລະ ບໍລິມາດຖັງ ແກ໊ສຫຸງຕົ້ມ;
7. ໄດ້ຮັບການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຕົນ ຕາມກົດໝາຍ ແລະ ລະບຽບການ;
8. ໄດ້ຮັບການສົ່ງເສີມ ແລະ ການຊ່ວຍເຫຼືອທາງດ້ານວິຊາການ ແລະ ເຕັກໂນໂລຊີ;
9. ນຳໃຊ້ສິດອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 18 ພັນທະ ຂອງຜູ້ດຳເນີນທຸລະກິດນຳເຂົ້າແກ໊ສຫຸງຕົ້ມ**

ຜູ້ດຳເນີນທຸລະກິດນຳເຂົ້າແກ໊ສຫຸງຕົ້ມ ມີພັນທະ ດັ່ງນີ້:

1. ນຳເຂົ້າແກ໊ສຫຸງຕົ້ມ ຕ້ອງຜ່ານດ່ານສາກົນເທົ່ານັ້ນ;
2. ຖືບັນຊີ ຕາມທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍການບັນຊີ;
3. ມີຖັງແກ໊ສຫຸງຕົ້ມທີ່ຕິດເຄື່ອງໝາຍການຄ້າ ຫຼື ສັນຍາລັກ, ຕິດດອນອັດຖັງແກ໊ສຫຸງຕົ້ມ ຫຼື ຢາງປິດຫົວວາວບໍລິສັດຂອງຕົນ, ຕິດສະຫຼາກເປັນພາສາລາວ, ມີຄຳແນະນຳການນຳໃຊ້, ການບຳລຸງຮັກສາ, ຄຳເຕືອນ, ຂໍ້ຄວນລະວັງທາງດ້ານຄວາມປອດໄພ, ລະບຸຊະນິດ ແລະ ສ່ວນປະກອບຂອງແກ໊ສຫຸງຕົ້ມ;
4. ສ້າງແຜນການນຳເຂົ້າ ແລະ ຈຳໜ່າຍແກ໊ສຫຸງຕົ້ມ ປະຈຳປີ ສະເໜີກົມການຄ້າພາຍໃນ ກ່ອນວັນທີ 31 ຕຸລາ ຂອງແຕ່ລະປີ ເພື່ອພິຈາລະນາຮັບຮອງ;
5. ຮັບປະກັນທາງດ້ານມາດຕະຖານຖັງ, ຄຸນນະພາບ ແລະ ບໍລິມາດແກ໊ສຫຸງຕົ້ມ;
6. ຮັບຜິດຊອບຕໍ່ຜົນເສຍຫາຍຕ່າງໆ ທີ່ເກີດຂຶ້ນຈາກການຂົນສົ່ງແກ໊ສຫຸງຕົ້ມ ໃນເວລາຂົນສົ່ງໃຫ້ລູກຄ້າຂອງຕົນ;
7. ນຳເຂົ້າ ແລະ ຈຳໜ່າຍແກ໊ສຫຸງຕົ້ມ ໂດຍສອດຄ່ອງກັບມາດຕະຖານແຫ່ງຊາດ;
8. ປະຕິບັດລາຄາແກ໊ສຫຸງຕົ້ມ ຕາມການກຳນົດຂອງກະຊວງອຸດສາຫະກຳ ແລະ ການຄ້າ ໃນແຕ່ລະໄລຍະ;
9. ຮັບປະກັນຄວາມປອດໄພດ້ານອັກຄີໄພ ແລະ ຄວາມສ່ຽງທີ່ອາດເກີດຂຶ້ນຢູ່ໃນສາງ;
10. ສະຫຼຸບບັນຊີການເງິນປະຈຳປີ ໂດຍມີການຢັ້ງຢືນຈາກຂະແໜງການເງິນ ເພື່ອລາຍງານໃຫ້ຂະແໜງອຸດສາຫະກຳ ແລະ ການຄ້າ;
11. ພະນັກງານຕ້ອງໄດ້ຮັບການຝຶກອົບຮົມ ວຽກງານສະກັດກັ້ນ ແລະ ຕ້ານອັກຄີໄພ;
12. ປະຕິບັດພັນທະພາສີ, ອາກອນ ແລະ ພັນທະອື່ນ ໃຫ້ແກ່ລັດຕາມກົດໝາຍ ແລະ ລະບຽບການ;
13. ຊຳລະສະສາງ ຜ່ານສະຖາບັນການເງິນ ຫຼື ທະນາຄານທຸລະກິດ ທີ່ຕັ້ງຢູ່ ສປປ ລາວ;
14. ລາຍງານການນຳເຂົ້າ ແລະ ການຈຳໜ່າຍແກ໊ສຫຸງຕົ້ມ ປະຈຳເດືອນ, ງວດ ແລະ ປີ;
15. ປະຕິບັດພັນທະອື່ນ ຕາມກົດໝາຍ ແລະລະບຽບການ.

**ມາດຕາ 19 ສິດຂອງຜູ້ດຳເນີນທຸລະກິດຮ້ານຈຳໜ່າຍແກ໊ສຫຸງຕົ້ມ**

ຜູ້ດຳເນີນທຸລະກິດຮ້ານຈຳໜ່າຍແກ໊ສຫຸງຕົ້ມ ມີສິດ ດັ່ງນີ້:

1. ໄດ້ຮັບຂໍ້ມູນຂ່າວສານ ກ່ຽວກັບການຈຳໜ່າຍແກ໊ສຫຸງຕົ້ມ;
2. ໄດ້ຮັບການສະໜອງແກ໊ສຫຸງຕົ້ມ ຈາກທຸລະກິດນຳເຂົ້າຕາມສັນຍາ;
3. ຈຳໜ່າຍອຸປະກອນ ກ່ຽວກັບແກ໊ສຫຸງຕົ້ມ ເປັນຕົ້ນ: ເຕົາແກ໊ສ, ທໍ່ສົ່ງ, ວາວປິດ/ເປີດ, ວາວຄວາມດັນ ແລະ ອື່ນ;
4. ປະຕິເສດການຮັບເອົາຖັງ ແລະ ແກ໊ສຫຸງຕົ້ມ ທີ່ບໍ່ໄດ້ມາດຕະຖານ, ຄຸນນະພາບ ແລະ ປະລິມານ ຕາມມາດຕະຖານແຫ່ງຊາດ;

5. ໄດ້ຮັບການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຕົນ ຕາມກົດໝາຍ ແລະ ລະບຽບການ;
6. ໄດ້ຮັບການສົ່ງເສີມ ແລະ ການຊ່ວຍເຫຼືອທາງດ້ານວິຊາການ ແລະ ເຕັກໂນໂລຊີ;
7. ນຳໃຊ້ສິດອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 20 ພັນທະ ຂອງຜູ້ດຳເນີນທຸລະກິດຮ້ານຈຳໜ່າຍແກັສຫຸງຕົ້ມ**

ຜູ້ດຳເນີນທຸລະກິດຮ້ານຈຳໜ່າຍແກັສຫຸງຕົ້ມ ມີພັນທະ ດັ່ງນີ້:

1. ດຳເນີນທຸລະກິດຕາມທີ່ໄດ້ຮັບອະນຸຍາດ;
2. ຖືບັນຊີ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍບັນຊີ;
3. ຊື້ແກັສຫຸງຕົ້ມ ຈາກບໍລິສັດນຳເຂົ້າແກັສຫຸງຕົ້ມ ທີ່ໄດ້ຮັບອະນຸຍາດຕາມສັນຍາ;
4. ປະຕິບັດລາຄາ ແລະ ຕິດປ້າຍລາຄາແກັສຫຸງຕົ້ມເປັນເງິນກີບ ຕາມການກຳນົດຂອງກະຊວງອຸດສາຫະກຳ ແລະ ການຄ້າ ໃນແຕ່ລະໄລຍະ;
5. ຈຳໜ່າຍແກັສຫຸງຕົ້ມ ທີ່ບັນຈຸໃນຖັງທີ່ຕິດເຄື່ອງໝາຍການຄ້າ ຫຼື ສັນຍາລັກ, ຕິດດອນອັດຖັງແກັສຫຸງຕົ້ມ ຫຼື ຢາງປິດຫົວວາວ ຂອງບໍລິສັດທີ່ຕົນເປັນຕົວແທນ, ຕິດສະຫຼາກເປັນພາສາລາວ, ມີຄຳແນະນຳການນຳໃຊ້, ການບຳລຸງຮັກສາ, ຄຳເຕືອນ, ຂໍ້ຄວນລະວັງທາງດ້ານຄວາມປອດໄພ, ລະບຸຊະນິດ ແລະ ສ່ວນປະກອບຂອງແກັສຫຸງຕົ້ມ;
6. ຮັບປະກັນທາງດ້ານມາດຕະຖານ, ຄຸນນະພາບ, ປະລິມານ ແກັສຫຸງຕົ້ມ ແລະ ຮັບຜິດຊອບຕໍ່ຜົນເສຍຫາຍຕ່າງໆ ທີ່ເກີດຂຶ້ນຈາກການຂົນສົ່ງແກັສຫຸງຕົ້ມ ໃນເວລາຂົນສົ່ງໃຫ້ລູກຄ້າຂອງຕົນ;
7. ຮັບປະກັນຄວາມປອດໄພດ້ານອັກຄີໄພ ແລະ ຄວາມສ່ຽງທີ່ອາດເກີດຂຶ້ນ;
8. ປະຕິບັດພັນທະພາສີ, ອາກອນ ແລະ ພັນທະອື່ນ ໃຫ້ແກ່ລັດຕາມກົດໝາຍ ແລະ ລະບຽບການ;
9. ຈຳໜ່າຍແກັສຫຸງຕົ້ມ ປະປົນກັບສິນຄ້າອື່ນ ທີ່ອາດເປັນສາເຫດກໍ່ໃຫ້ເກີດອັກຄີໄພ;
10. ໃຫ້ຄວາມຮ່ວມມືກັບພາກລັດ ໃນການສະໜອງຂໍ້ມູນຕ່າງໆ ທີ່ຕິດພັນກັບທຸລະກິດຂອງຕົນຕາມກຳນົດເວລາ;
11. ສະຫຼຸບລາຍງານການຈຳໜ່າຍແກັສຫຸງຕົ້ມປະຈຳປີ ໃຫ້ຂະແໜງອຸດສາຫະກຳ ແລະ ການຄ້າ;
12. ປະຕິບັດພັນທະອື່ນ ຕາມກົດໝາຍ ແລະ ລະບຽບການ.

## ໝວດທີ 6
## ຫຼັກການກຳນົດໂຄງປະກອບ ແລະ ລາຄາ ແກັສຫຸງຕົ້ມ

**ມາດຕາ 21 ຫຼັກການກຳນົດໂຄງປະກອບລາຄາແກັສຫຸງຕົ້ມ**

ກຳນົດໂຄງປະກອບລາຄາແກັສຫຸງຕົ້ມ ມີ ດັ່ງນີ້:

1. ກຳນົດຕາມກົນໄກຕະຫຼາດ ທີ່ມີການຄຸ້ມຄອງດັດສົມຂອງລັດ;
2. ປະຕິບັດຕາມນະໂຍບາຍຂອງລັດ ກ່ຽວກັບການດັດສົມລາຄາແກັສຫຸງຕົ້ມ ໃນແຕ່ລະໄລຍະ.

**ມາດຕາ 22 ການກຳນົດລາຄາແກັສຫຸງຕົ້ມ**

ການກຳນົດລາຄາແກັສຫຸງຕົ້ມ ປະຕິບັດ ດັ່ງນີ້:

1. ໂຄງປະກອບລາຄາແກັສຫຸງຕົ້ມ ທີ່ລັດຖະບານກຳນົດ ໃນແຕ່ລະໄລຍະ;
2. ລາຄາແກັສຫຸງຕົ້ມຕະຫຼາດໂລກ ແລະ ພາກພື້ນ ໃນແຕ່ລະໄລຍະ.

**ມາດຕາ 23 ການແຈ້ງປັບລາຄາແກ໊ສຫຸງຕົ້ມ**

ກະຊວງອຸດສາຫະກໍາ ແລະ ການຄ້າ ຕ້ອງແຈ້ງການປັບລາຄາແກ໊ສຫຸງຕົ້ມ ແຕ່ລະຄັ້ງ ໃຫ້ກະຊວງການເງິນ ເພື່ອຈັດເກັບພັນທະດ້ານພາສີ, ອາກອນ ແລະ ພັນທະອື່ນ ຕາມໂຄງປະກອບລາຄາແກ໊ສຫຸງຕົ້ມ ແລະ ເຜີຍແຜ່ໃຫ້ສັງຄົມຊາບ.

ຜູ້ດໍາເນີນທຸລະກິດນໍາເຂົ້າ ແລະ ຈໍາໜ່າຍແກ໊ສຫຸງຕົ້ມ ຕ້ອງປະຕິບັດຕາມລາຄາແກ໊ສຫຸງຕົ້ມ ຕາມແຈ້ງການຂອງກະຊວງອຸດສາຫະກໍາ ແລະ ການຄ້າ ວາງອອກໃນແຕ່ລະໄລຍະ.

## ໝວດທີ 7
## ຂໍ້ຫ້າມ

**ມາດຕາ 24 ຂໍ້ຫ້າມທົ່ວໄປ**

ຫ້າມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກໍາ ດັ່ງນີ້:

1. ດໍາເນີນທຸລະກິດແກ໊ສຫຸງຕົ້ມ ໂດຍບໍ່ໄດ້ຮັບອະນຸຍາດ;
2. ສ້າງອຸປະສັກ, ຂັດຂວາງ, ໃຊ້ຄວາມຮຸນແຮງ, ບັງຂັບນາບຂູ່, ໝິ່ນປະໝາດການປະຕິບັດໜ້າທີ່ຂອງພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;
3. ປອມແປງເອກະສານ ຫຼື ນໍາໃຊ້ເອກະສານປອມ ກ່ຽວກັບທຸລະກິດແກ໊ສຫຸງຕົ້ມ;
4. ປົກປັງຂໍ້ມູນຄວາມຈິງ ຫຼື ບໍ່ໃຫ້ການຮ່ວມມືແກ່ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;
5. ໃຫ້, ເປັນສື່ກາງໃນການໃຫ້ ຫຼື ຮັບ ສິນບົນ;
6. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 25 ຂໍ້ຫ້າມສໍາລັບ ຜູ້ດໍາເນີນທຸລະກິດນໍາເຂົ້າແກ໊ສຫຸງຕົ້ມ**

ຫ້າມຜູ້ດໍາເນີນທຸລະກິດນໍາເຂົ້າແກ໊ສຫຸງຕົ້ມ ມີພຶດຕິກໍາ ດັ່ງນີ້:

1. ນໍາເຂົ້າ ແລະ ຈໍາໜ່າຍແກ໊ສຫຸງຕົ້ມ ທີ່ບໍ່ໄດ້ມາດຕະຖານແຫ່ງຊາດ;
2. ກັກຕຸນແກ໊ສຫຸງຕົ້ມ ເພື່ອເກງກໍາໄລ ຫຼື ປັ່ນປ່ວນຕະຫຼາດ;
3. ດໍາເນີນທຸລະກິດ ໂດຍບໍ່ມີໃບອະນຸຍາດດໍາເນີນທຸລະກິດ ຫຼື ໃບອະນຸຍາດດໍາເນີນທຸລະກິດໝົດອາຍຸ;
4. ນໍາເຂົ້າແກ໊ສຫຸງຕົ້ມ ໃນຮູບແບບຖັງແກ໊ສຫຸງຕົ້ມ;
5. ດໍາເນີນທຸລະກິດໂດຍບໍ່ສອດຄ່ອງກັບຂອບເຂດທີ່ໄດ້ຮັບອະນຸຍາດ;
6. ໃຫ້ຜູ້ອື່ນນໍາໃຊ້ໃບອະນຸຍາດດໍາເນີນທຸລະກິດນໍາເຂົ້າແກ໊ສຫຸງຕົ້ມ ຫຼື ແຜນການຈໍາໜ່າຍແກ໊ສຫຸງຕົ້ມປະຈໍາປີ ທີ່ໄດ້ຮັບການອະນຸມັດ;
7. ສະໜອງ, ຖ່າຍຖ່າຍແກ໊ສຫຸງຕົ້ມ ໃສ່ຖັງໃຫ້ແກ່ຜູ້ດໍາເນີນທຸລະກິດຈໍາໜ່າຍແກ໊ສຫຸງຕົ້ມ ຫຼື ໂຮງງານອຸດສາຫະກໍາປຸງແຕ່ງ ໂດຍບໍ່ມີສັນຍາ;
8. ຈໍາໜ່າຍແກ໊ສຫຸງຕົ້ມ ທີ່ບັນຈຸໃນຖັງ ໂດຍບໍ່ມີເຄື່ອງໝາຍການຄ້າ ຫຼື ສັນຍາລັກ, ຕິດດອນອັດຖັງແກ໊ສຫຸງຕົ້ມ ຫຼື ຢາງປິດຫົວວາວຂອງບໍລິສັດຕົນ, ຕິດສະຫຼາກເປັນພາສາລາວ, ມີຄໍາແນະນໍາການນໍາໃຊ້, ການບໍາລຸງຮັກສາ, ຄໍາເຕືອນ, ຂໍ້ຄວນລະວັງທາງດ້ານຄວາມປອດໄພ, ລະບຸຊະນິດ ແລະ ສ່ວນປະກອບຂອງແກ໊ສຫຸງຕົ້ມ;
9. ມອບສິດໃຫ້ຮ້ານຈໍາໜ່າຍແກ໊ສຫຸງຕົ້ມ ຫຼື ບຸກຄົນໃດໜຶ່ງ ນໍາເຂົ້າແກ໊ສຫຸງຕົ້ມ;
10. ນໍາເຂົ້າແກ໊ສຫຸງຕົ້ມໂດຍບໍ່ປະຕິບັດພັນທະພາສີ, ອາກອນ ແລະ ພັນທະອື່ນ ຫຼື ປະຕິບັດພັນທະບໍ່ຄົບຖ້ວນ;
11. ຈໍາໜ່າຍແກ໊ສຫຸງຕົ້ມ ບໍ່ຖືກຕ້ອງຕາມລາຄາແກ໊ສຫຸງຕົ້ມ ທີ່ລັດກໍານົດ;
12. ສະໜອງແກ໊ສຫຸງຕົ້ມໃຫ້ແກ່ຮ້ານຈໍາໜ່າຍ ຫຼື ຮ້ານຕົວແທນ ໂດຍບໍ່ມີສັນຍາຊື້-ຂາຍ;
13. ນໍາເຂົ້າ ແລະ ຈໍາໜ່າຍແກ໊ສຫຸງຕົ້ມ ໂດຍບໍ່ລົງສາງແກ໊ສຫຸງຕົ້ມ;
14. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 26 ຂໍ້ຫ້າມສຳລັບ ຜູ້ດຳເນີນກິດຈະການຮ້ານຈຳໜ່າຍແກັສຫຸງຕົ້ມ**

ຫ້າມຜູ້ດຳເນີນກິດຈະການຮ້ານຈຳໜ່າຍແກັສຫຸງຕົ້ມ ມີພຶດຕິກຳ ດັ່ງນີ້:

1. ຈຳໜ່າຍແກັສຫຸງຕົ້ມ ທີ່ບໍ່ໄດ້ມາດຕະຖານແຫ່ງຊາດ;
2. ດຳເນີນທຸລະກິດ ໂດຍບໍ່ສອດຄ່ອງກັບຂອບເຂດທີ່ໄດ້ຮັບອະນຸຍາດ;
3. ດຳເນີນທຸລະກິດ ໂດຍບໍ່ມີໃບອະນຸຍາດດຳເນີນທຸລະກິດ ຫຼື ໃບອະນຸຍາດດຳເນີນທຸລະກິດໝົດອາຍຸ;
4. ໃຫ້ຜູ້ອື່ນນຳໃຊ້ໃບອະນຸຍາດການດຳເນີນທຸລະກິດຈຳໜ່າຍແກັສຫຸງຕົ້ມ;
5. ນຳເຂົ້າແກັສຫຸງຕົ້ມດ້ວຍຕົນເອງ;
6. ນຳໃຊ້ ຫຼື ຈຳໜ່າຍຖັງແກັສຫຸງຕົ້ມ ທີ່ບໍ່ໄດ້ມາດຕະຖານຕາມຂະແໜງທີ່ກ່ຽວຂ້ອງກຳນົດ;
7. ຖ່າຍເທແກັສຫຸງຕົ້ມ ລະຫວ່າງ ຖັງຕໍ່ຖັງ ຫຼື ຈາກຖັງ ໄປຍັງສິ່ງບັນຈຸອື່ນ;
8. ຊື້ແກັສຫຸງຕົ້ມນຳຜູ້ດຳເນີນທຸລະກິດນຳເຂົ້າແກັສຫຸງຕົ້ມ ໂດຍບໍ່ມີສັນຍາຊື້-ຂາຍ;
9. ຈຳໜ່າຍແກັສຫຸງຕົ້ມ ໂດຍບໍ່ຖືກຕ້ອງຕາມລາຄາແກັສຫຸງຕົ້ມທີ່ລັດກຳນົດ;
10. ຈຳໜ່າຍຖັງແກັສຫຸງຕົ້ມ ທີ່ບໍ່ມີເຄື່ອງໝາຍການຄ້າ ຫຼື ສັນຍາລັກ, ຕິດຄອນອັດຖັງແກັສຫຸງຕົ້ມ ຫຼື ຢາງປິດຫົວວາວ ຂອງບໍລິສັດທີ່ເປັນຕົວແທນ, ຕິດສະຫຼາກເປັນພາສາລາວ, ມີຄຳແນະນຳການນຳໃຊ້, ການບຳລຸງຮັກສາ, ຄຳເຕືອນ, ຂໍ້ຄວນລະວັງທາງດ້ານຄວາມປອດໄພ, ລະບຸຊະນິດ ແລະ ສ່ວນປະກອບຂອງແກັສຫຸງຕົ້ມ;
11. ຮັບ ແລະ ຂາຍແກັສຫຸງຕົ້ມ ຂອງຜູ້ດຳເນີນທຸລະກິດນຳເຂົ້າແກັສຫຸງຕົ້ມອື່ນທີ່ຕົນບໍ່ມີສັນຍາຊື້-ຂາຍ;
12. ຈຳໜ່າຍແກັສຫຸງຕົ້ມປະປົນກັບສິນຄ້າອື່ນ ທີ່ອາດເປັນສາເຫດກໍ່ໃຫ້ເກີດອັກຄີໄພ;
13. ຈຳໜ່າຍແກັສຫຸງຕົ້ມ ໂດຍບໍ່ປະຕິບັດພັນທະພາສີ, ອາກອນ ແລະ ພັນທະອື່ນ ຫຼື ປະຕິບັດພັນທະບໍ່ຄົບຖ້ວນ;
14. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 27 ຂໍ້ຫ້າມສຳລັບເຈົ້າໜ້າທີ່ ຫຼື ພະນັກງານ**

ຂໍ້ຫ້າມ ເຈົ້າໜ້າທີ່ ຫຼື ພະນັກງານ ມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ ໜ້າທີ່, ຕຳແໜ່ງ ເພື່ອຜົນປະໂຫຍດ ສ່ວນຕົວ, ຍາດພີ່ນ້ອງ ແລະ ພັກພວກ ຂອງຕົນ;
2. ກົດໜ່ວງ, ຖ່ວງດຶງ ຫຼື ແກ່ຍາວເວລາ ໃນການພິຈາລະນາເອກະສານ;
3. ເປີດເຜີຍຂໍ້ມູນທີ່ເປັນຄວາມລັບ ກ່ຽວກັບທຸລະກິດແກັສຫຸງຕົ້ມ ໂດຍບໍ່ໄດ້ຮັບອະນຸຍາດ;
4. ອອກໃບອະນຸຍາດດຳເນີນທຸລະກິດແກັສຫຸງຕົ້ມ ໂດຍບໍ່ຖືກຕ້ອງຕາມລະບຽບການ;
5. ຮຽກເອົາ, ທວງເອົາ ຫຼື ຮັບເອົາ ສິນບົນ;
6. ເປັນນາຍໜ້າ, ທີ່ປຶກສາ ໃຫ້ແກ່ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ກ່ຽວກັບທຸລະກິດຂາຍແກັສຫຸງຕົ້ມ;
7. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

## ໝວດທີ 8
## ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງທຸລະກິດແກັສຫຸງຕົ້ມ

**ມາດຕາ 28 ການຈັດຕັ້ງປະຕິບັດຄຸ້ມຄອງທຸລະກິດແກັສຫຸງຕົ້ມ**

ການຈັດຕັ້ງປະຕິບັດຄຸ້ມຄອງທຸລະກິດແກັສຫຸງຕົ້ມ ຂອງຂະແໜງອຸດສາຫະກຳ ແລະ ການຄ້າ ແບ່ງອອກເປັນ ສາມ ຂັ້ນ ຄື:

1. ຂັ້ນສູນກາງ ແມ່ນ ກົມການຄ້າພາຍໃນ ແລະ ກົມມາດຕະຖານ ແລະ ວັດແທກ;
2. ຂັ້ນແຂວງ ແມ່ນ ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ;
3. ຂັ້ນເມືອງ ແມ່ນ ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ.

**ມາດຕາ 29 ສິດ ແລະ ໜ້າທີ່ ຂອງກົມການຄ້າພາຍໃນ**

ກົມການຄ້າພາຍໃນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າສ້າງ ແລະ ປັບປຸງນິຕິກຳ ກ່ຽວກັບວຽກງານຄຸ້ມຄອງຄຸ້ມຄອງທຸລະກິດແກ໊ສຫຸງຕົ້ມ ເພື່ອນຳສະເໜີຂັ້ນເທິງພິຈາລະນາ;

2. ເຜີຍແຜ່, ແນະນຳຂໍ້ຕົກລົງສະບັບນີ້ ພ້ອມດ້ວຍກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ, ຂໍ້ມູນຂ່າວສານ ກ່ຽວກັບວຽກງານຄຸ້ມຄອງທຸລະກິດແກ໊ສຫຸງຕົ້ມ ໃຫ້ສັງຄົມຮັບຊາບຢ່າງທົ່ວເຖິງ;

3. ພິຈາລະນາອອກ, ຕໍ່ອາຍຸ, ໂຈະ ແລະ ຍົກເລີກ ໃບອະນຸຍາດດຳເນີນທຸລະກິດແກ໊ສຫຸງຕົ້ມ ສຳລັບວິສາຫະກິດ ນຳເຂົ້າແກ໊ສຫຸງຕົ້ມ ໃນຮູບແບບວິສາຫະກິດຄົນລາວ ຮ່ວມທຶນກັບຕ່າງປະເທດ ແລະ ວິສາຫະກິດຄົນຕ່າງປະເທດລົງທຶນຮ້ອຍສ່ວນຮ້ອຍ;

4. ຄົ້ນຄວ້າໂຄງປະກອບລາຄາແກ໊ສຫຸງຕົ້ມ ເພື່ອສະເໜີຂັ້ນເທິງພິຈາລະນາ ແຕ່ລະໄລຍະ;

5. ຄົ້ນຄວ້າປັບລາຄາ ແລະ ແຈ້ງການລາຄາ ແກ໊ສຫຸງຕົ້ມ ເປັນແຕ່ລະໄລຍະ;

6. ຢັ້ງຢືນແຜນການຈຳໜ່າຍ, ດອນອັດ ແລະ ສີຖັງແກ໊ສຫຸງຕົ້ມ ໃຫ້ແກ່ຜູ້ດຳເນີນທຸລະກິດນຳເຂົ້າແກ໊ສຫຸງຕົ້ມ;

7. ປະສານສົມທົບກັບຂະແໜງທີ່ກ່ຽວຂ້ອງ ກ່ຽວກັບວຽກງານຄຸ້ມຄອງທຸລະກິດແກ໊ສຫຸງຕົ້ມ;

8. ຮັບ ແລະ ພິຈາລະນາແກ້ໄຂຄຳສະເໜີ ຂອງຜູ້ດຳເນີນທຸລະກິດແກ໊ສຫຸງຕົ້ມ ແລະ ຜູ້ຊົມໃຊ້;

9. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານຄຸ້ມຄອງທຸລະກິດແກ໊ສຫຸງຕົ້ມ ໃຫ້ຂັ້ນເທິງຮັບຊາບ ຢ່າງເປັນປົກກະຕິ;

10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍແລະລະບຽບການ.

**ມາດຕາ 30 ສິດ ແລະ ໜ້າທີ່ ຂອງກົມມາດຕະຖານ ແລະ ວັດແທກ**

ກົມມາດຕະຖານ ແລະ ວັດແທກ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າສ້າງ ແລະ ປັບປຸງນິຕິກຳ ກ່ຽວກັບວຽກງານຢັ້ງຢືນມາດຕະຖານຖັງແກ໊ສຫຸງຕົ້ມ, ຄຸນນະພາບ ແລະ ບໍລິມາດ ແກ໊ສຫຸງຕົ້ມ ເພື່ອນຳສະເໜີຂັ້ນເທິງພິຈາລະນາ;

2. ເຜີຍແຜ່, ແນະນຳຂໍ້ຕົກລົງສະບັບນີ້, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງກັບວຽກງານຢັ້ງຢືນມາດຕະຖານຖັງແກ໊ສຫຸງຕົ້ມ, ຄຸນນະພາບ ແລະ ບໍລິມາດ ຖັງແກ໊ສຫຸງຕົ້ມ;

3. ອອກໃບຢັ້ງຢືນມາດຕະຖານແກ໊ສຫຸງຕົ້ມ, ຄຸນນະພາບ ແລະ ບໍລິມາດ ຖັງແກ໊ສຫຸງຕົ້ມ;

4. ຮັບ ແລະ ພິຈາລະນາແກ້ໄຂຄຳສະເໜີຜູ້ຊົມໃຊ້ ກ່ຽວກັບວຽກງານຢັ້ງຢືນມາດຕະຖານຖັງແກ໊ສຫຸງຕົ້ມ, ຄຸນນະພາບ ແລະ ບໍລິມາດ ຖັງແກ໊ສຫຸງຕົ້ມ;

5. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານຢັ້ງຢືນມາດຕະຖານຖັງແກ໊ສຫຸງຕົ້ມ, ຄຸນນະພາບ ແລະ ບໍລິມາດ ແກ໊ສຫຸງຕົ້ມ ໃຫ້ຂັ້ນເທິງຮັບຊາບ ຢ່າງເປັນປົກກະຕິ;

6.ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 31 ສິດ ແລະ ໜ້າທີ່ ຂອງພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ**

ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເຜີຍແຜ່, ແນະນຳຂໍ້ຕົກລົງສະບັບນີ້ ພ້ອມດ້ວຍກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ, ຂໍ້ມູນຂ່າວສານ ກ່ຽວກັບວຽກງານຄຸ້ມຄອງທຸລະກິດແກ໊ສຫຸງຕົ້ມ ໃຫ້ສັງຄົມຮັບຊາບຢ່າງທົ່ວເຖິງ;

2. ພິຈາລະນາອອກ, ຕໍ່ອາຍຸ, ໂຈະ ຫຼື ຍົກເລີກ ໃບອະນຸຍາດດຳເນີນທຸລະກິດແກ໊ສຫຸງຕົ້ມ ສຳລັບການດຳເນີນທຸລະກິດນຳເຂົ້າແກ໊ສຫຸງຕົ້ມ ຮູບແບບວິສາຫະກິດຄົນລາວ, ທຸລະກິດຈຳໜ່າຍແກ໊ສຫຸງຕົ້ມຂອງຄົນລາວຮ່ວມທຶນກັບຕ່າງປະເທດ ແລະ ທຸລະກິດຈຳໜ່າຍແກ໊ສຫຸງຕົ້ມ ຂອງຄົນຕ່າງປະເທດລົງທຶນຮ້ອຍສ່ວນຮ້ອຍ;

3. ສ້າງແຜນການສະໜອງ ແລະ ຄວາມຕ້ອງການແກ໊ສຫຸງຕົ້ມປະຈຳປີ ແລະ ລາຍງານໃຫ້ກົມການຄ້າພາຍໃນ;

4. ປະສານສົມທົບກັບຫ້ອງການອຸດສາຫະກຳ ແລະ ການຄ້າ, ເມືອງ, ນະຄອນ ຕິດຕາມ ກວດກາ ການປະຕິບັດລາຄາຈຳໜ່າຍແກັສຫຸງຕົ້ມ ເປັນແຕ່ລະໄລຍະ;

5. ປະສານສົມທົບ ກັບຂະແໜງທີ່ກ່ຽວຂ້ອງ ກ່ຽວກັບວຽກງານຄຸ້ມຄອງທຸລະກິດແກັສຫຸງຕົ້ມ;

6. ຮັບ ແລະ ພິຈາລະນາແກ້ໄຂຄຳສະເໜີ ຂອງຜູ້ດຳເນີນທຸລະກິດແກັສຫຸງຕົ້ມ ແລະ ຜູ້ຊົມໃຊ້;

7. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດຄຸ້ມຄອງວຽກງານຄຸ້ມຄອງທຸລະກິດແກັສຫຸງຕົ້ມ ໃຫ້ ກົມການຄ້າພາຍໃນ ປະຈຳທຸກເດືອນ ແລະ ປີ ຢ່າງເປັນປົກກະຕິ;

8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 32 ສິດ ແລະ ໜ້າທີ່ຂອງຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ**

ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເຜີຍແຜ່, ແນະນຳຂໍ້ຕົກລົງສະບັບນີ້ ພ້ອມດ້ວຍກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ, ຂໍ້ມູນ ຂ່າວສານ ກ່ຽວກັບວຽກງານຄຸ້ມຄອງທຸລະກິດແກັສຫຸງຕົ້ມ ໃຫ້ສັງຄົມຮັບຊາບຢ່າງທົ່ວເຖິງ;

2. ຄຸ້ມຄອງ ແລະ ຕິດຕາມ ກວດກາ ການເຄື່ອນໄຫວດຳເນີນທຸລະກິດນຳເຂົ້າ ແລະ ຈຳໜ່າຍແກັສ ຫຸງຕົ້ມ ໃນຂອບເຂດເມືອງ, ນະຄອນຂອງຕົນ;

3. ພິຈາລະນາອອກ, ຕໍ່ອາຍຸ, ໂຈະ ຫຼື ຍົກເລີກ ໃບອະນຸຍາດດຳເນີນທຸລະກິດແກັສຫຸງຕົ້ມ ສຳລັບ ທຸລະກິດຈຳໜ່າຍແກັສຫຸງຕົ້ມ ຂອງຄົນລາວ;

4. ຕິດຕາມ ກວດກາ ການປະຕິບັດລາຄາຈຳໜ່າຍແກັສຫຸງຕົ້ມ ເປັນແຕ່ລະໄລຍະ;

5. ປະສານສົມທົບກັບຂະແໜງທີ່ກ່ຽວຂ້ອງ ກ່ຽວກັບວຽກງານຄຸ້ມຄອງທຸລະກິດແກັສຫຸງຕົ້ມ;

6. ສ້າງແຜນການສະໜອງ ແລະ ຄວາມຕ້ອງການແກັສຫຸງຕົ້ມປະຈຳປີ ແລະ ລາຍງານໃຫ້ພະແນກ ອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ;

7. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານຄຸ້ມຄອງທຸລະກິດຈຳໜ່າຍແກັສຫຸງຕົ້ມ ໃຫ້ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ເປັນປະຈຳ ທຸກເດືອນ ແລະ ປີ ຢ່າງເປັນປົກກະຕິ;

8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

## ໝວດທີ 9
## ມາດຕະການປັບໃໝຕໍ່ຜູ້ລະເມີດລະບຽບການ ກ່ຽວກັບການດຳເນີນທຸລະກິດ ແກັສຫຸງຕົ້ມ

**ມາດຕາ 33 ມາດຕະການປັບໃໝ**

ມາດຕະການປັບໃໝຕໍ່ຜູ້ລະເມີດລະບຽບການ ກ່ຽວກັບການດຳເນີນທຸລະກິດນຳເຂົ້າ ແລະ ຈຳໜ່າຍ ແກັສຫຸງຕົ້ມ ມີດັ່ງນີ້:

**1. ການລະເມີດລະບຽບການ ກ່ຽວກັບການດຳເນີນທຸລະກິດນຳເຂົ້າແກັສຫຸງຕົ້ມ**

1) ນຳເຂົ້າ ແລະ ຈຳໜ່າຍແກັສຫຸງຕົ້ມ ທີ່ບໍ່ໄດ້ມາດຕະຖານແຫ່ງຊາດ ຈະຖືກນຳໃຊ້ມາດຕະການ ດັ່ງນີ້:

- ຄັ້ງທີໜຶ່ງ ຈະຖືກປັບໃໝ 20,000,000 ກີບ ພ້ອມທັງຈະຖືກສຶກສາອົບຮົມ, ກ່າວເຕືອນ ແລະ ເຮັດບົດບັນທຶກ;
- ຄັ້ງທີສອງ ຈະຖືກປັບໃໝ 40,000,000 ກີບ, ພ້ອມທັງຈະຖືກສຶກສາອົບຮົມ, ກ່າວເຕືອນ, ເຮັດບົດບັນທຶກ ແລະ ໂຈະໃບອະນຸຍາດດຳເນີນທຸລະກິດນຳເຂົ້າແກັສຫຸງຕົ້ມ;
- ຄັ້ງທີສາມ ຈະຖືກປັບໃໝ 60,000,000 ກີບ, ພ້ອມທັງຈະຖືກສຶກສາອົບຮົມ, ກ່າວເຕືອນ, ເຮັດບົດບັນທຶກ ແລະ ຍົກເລີກໃບອະນຸຍາດດຳເນີນທຸລະກິດນຳເຂົ້າແກັສຫຸງຕົ້ມ.

2) ດຳເນີນທຸລະກິດແກັສຫຸງຕົ້ມ ໂດຍບໍ່ມີໃບອະນຸຍາດດຳເນີນທຸລະກິດ ຫຼື ໃບອະນຸຍາດດຳເນີນທຸລະກິດໝົດອາຍຸ ຈະຖືກນຳໃຊ້ມາດຕະການ ດັ່ງນີ້:
- ຄັ້ງທີໜຶ່ງ ຈະຖືກປັບໃໝ 20,000,000 ກີບ ພ້ອມທັງຈະຖືກສຶກສາອົບຮົມ, ກ່າວເຕືອນ ແລະ ເຮັດປຶ້ມບັນທຶກ;
- ຄັ້ງທີສອງ ຈະຖືກປັບໃໝ 40,000,000 ກີບ, ພ້ອມທັງຈະຖືກສຶກສາອົບຮົມ, ກ່າວເຕືອນ, ເຮັດປຶ້ມບັນທຶກ ແລະ ໂຈະໃບອະນຸຍາດດຳເນີນທຸລະກິດນຳເຂົ້າແກັສຫຸງຕົ້ມ;
- ຄັ້ງທີສາມ ຈະຖືກປັບໃໝ 60,000,000 ກີບ, ພ້ອມທັງຈະຖືກສຶກສາອົບຮົມ, ກ່າວເຕືອນ, ເຮັດປຶ້ມບັນທຶກ ແລະ ຍົກເລີກໃບອະນຸຍາດດຳເນີນທຸລະກິດນຳເຂົ້າແກັສຫຸງຕົ້ມ.

3) ເຄື່ອນຍ້າຍແກັສຫຸງຕົ້ມຜ່ານແດນ ໂດຍບໍ່ ໄດ້ຮັບອະນຸຍາດ, ບໍ່ມີສັນຍາວ່າຈ້າງ ບໍລິສັດໃຫ້ບໍລິການຂົນສົ່ງແກັສຫຸງຕົ້ມ ທີ່ໄດ້ຮັບອະນຸຍາດຂົນສົ່ງແກັສຫຸງຕົ້ມ ລະຫວ່າງ ປະເທດ ແລະ ບໍ່ສັນຍາຊື້-ຂາຍແກັສຫຸງຕົ້ມ ຈາກຕົ້ນທາງ ແລະປາຍທາງ ຈະຖືກປັບໃໝ 30,000,000ກີບ/ຄັ້ງ ພ້ອມທັງຈະຖືກສຶກສາອົບຮົມ, ກ່າວເຕືອນ ແລະ ເຮັດປຶ້ມບັນທຶກ;

4) ສະໜອງແກັສຫຸງຕົ້ມ ໃຫ້ແກ່ຮ້ານຈຳໜ່າຍໂດຍບໍ່ມີສັນຍາຊື້-ຂາຍ ຈະຖືກນຳໃຊ້ມາດຕະການ ດັ່ງນີ້:
- ຄັ້ງທີໜຶ່ງ ຈະຖືກປັບໃໝ 30,000,000 ກີບ ພ້ອມທັງຈະຖືກສຶກສາອົບຮົມ, ກ່າວເຕືອນ ແລະ ເຮັດປຶ້ມບັນທຶກ;
- ຄັ້ງທີສອງ ຈະຖືກປັບໃໝ 50,000,000 ກີບ ພ້ອມທັງຈະຖືກສຶກສາອົບຮົມ, ກ່າວເຕືອນ, ເຮັດປຶ້ມບັນທຶກ ແລະ ໂຈະໃບອະນຸຍາດດຳເນີນທຸລະກິດນຳເຂົ້າແກັສຫຸງຕົ້ມ;
- ຄັ້ງທີສາມ ຈະຖືກປັບໃໝ 70,000,000 ກີບ ພ້ອມທັງຈະຖືກສຶກສາອົບຮົມ, ກ່າວເຕືອນ, ເຮັດປຶ້ມບັນທຶກ ແລະ ຍົກເລີກໃບອະນຸຍາດດຳເນີນທຸລະກິດນຳເຂົ້າແກັສຫຸງຕົ້ມ.

5) **ການລະເມີດລະບຽບການ ກ່ຽວກັບການດຳເນີນທຸລະກິດນຳເຂົ້າແກັສຫຸງຕົ້ມ ຕາມແຕ່ລະກໍລະນີ ດັ່ງນີ້:**
- ດຳເນີນທຸລະກິດແກັສຫຸງຕົ້ມ ໂດຍບໍ່ສອດຄ່ອງກັບຈຸດປະສົງທີ່ໄດ້ຮັບອະນຸຍາດ;
- ມອບໃບອະນຸຍາດດຳເນີນທຸລະກິດນຳເຂົ້າແກັສຫຸງຕົ້ມຫຼື ແຜນການຈຳໜ່າຍແກັສຫຸງຕົ້ມປະຈຳປີ ທີ່ໄດ້ຮັບການອະນຸມັດໃຫ້ຜູ້ອື່ນນຳໃຊ້;
- ສະໜອງ, ຖ່ຽນຖ່າຍ ແກັສຫຸງຕົ້ມໃສ່ຖັງ ໃຫ້ແກ່ບໍລິສັດນຳເຂົ້າ-ສົ່ງອອກ ໂດຍບໍ່ມີສັນຍາ;
- ຈຳໜ່າຍ ແກັສຫຸງຕົ້ມ ທີ່ບັນຈຸໃນຖັງໂດຍບໍ່ມີເຄື່ອງໝາຍການຄ້າ ຫຼື ສັນຍາລັກ, ຕິດຄອມອັດຖັງແກັສຫຸງຕົ້ມ ຫຼື ຢາງປິດຫົວວາວ ບໍລິສັດຂອງຕົນ, ຕິດສະຫຼາກເປັນພາສາລາວ, ມີຄຳແນະນຳການນຳໃຊ້, ການບຳລຸງຮັກສາ, ຄຳເຕືອນ, ຂໍ້ຄວນລະວັງທາງດ້ານຄວາມປອດໄພ, ລະບຸຊະນິດ ແລະ ສ່ວນປະກອບຂອງແກັສຫຸງຕົ້ມ;
- ມອບສິດໃຫ້ຮ້ານຈຳໜ່າຍແກັສຫຸງຕົ້ມ ຫຼື ບຸກຄົນໃດໜຶ່ງນຳເຂົ້າແກັສຫຸງຕົ້ມ;
- ນຳເຂົ້າແກັສຫຸງຕົ້ມ ໂດຍບໍ່ປະຕິບັດພັນທະ ຫຼື ປະຕິບັດພັນທະ ບໍ່ຄົບຖ້ວນ;
- ຈຳໜ່າຍແກັສຫຸງຕົ້ມ ບໍ່ຖືກຕ້ອງຕາມລາຄາແກັສຫຸງຕົ້ມ ທີ່ລັດກຳນົດ;
- ສະໜອງແກັສຫຸງຕົ້ມໃຫ້ແກ່ຮ້ານຈຳໜ່າຍ ຫຼື ຮ້ານຕົວແທນ ໂດຍບໍ່ມີສັນຍາຊື້-ຂາຍ;
- ນຳເຂົ້າ ແລະ ຈຳໜ່າຍແກັສຫຸງຕົ້ມ ໂດຍບໍ່ລົງສາງແກັສຫຸງຕົ້ມ;
- ສະໜອງແກັສຫຸງຕົ້ມໃຫ້ແກ່ຮ້ານຈຳໜ່າຍແກັສຫຸງຕົ້ມ ທີ່ບໍ່ແມ່ນຮ້ານຈຳໜ່າຍ ແລະ ຮ້ານຕົວແທນຂອງຕົນ ໂດຍບໍ່ໄດ້ຮັບອະນຸຍາດ;
- ນຳເຂົ້າ ແລະ ສະໜອງແກັສຫຸງຕົ້ມ ໂດຍບໍ່ຖ່ຽນຖ່າຍລົງສາງແກັສຫຸງຕົ້ມຂອງຕົນ ຫຼື ສາງແກັສຫຸງຕົ້ມທີ່ຕົນເຊົ່າ, ຍົກເວັ້ນ ໄດ້ຮັບອະນຸຍາດ ເປັນກໍລະນີສະເພາະ ຈາກກະຊວງອຸດສາຫະກຳ ແລະ ການຄ້າ;

- ຈຳໜ່າຍຖັງແກັສຫຸງຕົ້ມ ທີ່ບໍ່ຕິດເຄື່ອງໝາຍການຄ້າ ຫຼື ສັນຍາລັກ, ຕິດຄອນອັດຖັງແກັສຫຸງຕົ້ມ ຫຼື ຢາງປິດຫົວວາວ ບໍລິສັດຂອງຕົນ, ຕິດສະຫຼາກເປັນພາສາລາວ, ມີຄຳແນະນຳການນຳໃຊ້, ການບຳລຸງຮັກສາ, ຄຳເຕືອນ, ຂໍ້ຄວນລະວັງທາງດ້ານຄວາມປອດໄພ, ລະບຸຊະນິດ ແລະ ສ່ວນປະກອບຂອງແກັສຫຸງຕົ້ມ;
- ຈຳໜ່າຍແກັສຫຸງຕົ້ມ ໂດຍບໍ່ຖືກຕ້ອງຕາມລາຄາທີ່ລັດກຳນົດ;
- ມອບສິດໃຫ້ບຸກຄົນ, ນິຕິບຸກຄົນ ໃດໜຶ່ງນຳເຂົ້າແກັສຫຸງຕົ້ມ ໃນນາມບໍລິສັດຂອງຕົນ;
- ເອົາໃບອະນຸຍາດດຳເນີນທຸລະກິດ ຫຼື ແຜນການຈຳໜ່າຍແກັສຫຸງຕົ້ມປະຈຳປີ ທີ່ໄດ້ຮັບການອະນຸມັດໃຫ້ບຸກຄົນອື່ນນຳໃຊ້;
- ນຳເຂົ້າແກັສຫຸງຕົ້ມ ໂດຍບໍ່ໄດ້ຮັບອະນຸຍາດ ຫຼື ບໍ່ຖືກຕ້ອງຕາມການອະນຸຍາດນຳເຂົ້າ ຫຼື ນຳໃຊ້ບໍ່ຖືກຕ້ອງຕາມເປົ້າໝາຍ ຫຼື ນຳເຂົ້າໂດຍບໍ່ຜ່ານດ່ານສາກົນ.

**ການລະເມີດລະບຽບການ ກ່ຽວກັບການດຳເນີນທຸລະກິດນຳເຂົ້າແກັສຫຸງຕົ້ມ ຕາມທີ່ໄດ້ກຳນົດໄວ້ຂໍ້ທີ 5 ຂອງມາດຕານີ້, ໃຫ້ນຳໃຊ້ມາດຕະການ ດັ່ງນີ້:**
- ຄັ້ງທີໜຶ່ງ ຈະຖືກປັບໃໝ ຫ້າສິບສ່ວນຮ້ອຍ (50%) ຂອງມູນຄ່າແກັສຫຸງຕົ້ມທີ່ກວດພົບ ພ້ອມທັງຈະຖືກສຶກສາອົບຮົມ, ກ່າວເຕືອນ ແລະ ເຮັດບົດບັນທຶກ;
- ຄັ້ງທີສອງ ຈະຖືກປັບໃໝ ໜຶ່ງຮ້ອຍສ່ວນຮ້ອຍ (100%) ຂອງມູນຄ່າແກັສຫຸງຕົ້ມທີ່ກວດພົບ ພ້ອມທັງຈະຖືກສຶກສາອົບຮົມ, ກ່າວເຕືອນ, ເຮັດບົດບັນທຶກ ແລະ ໂຈະໃບອະນຸຍາດດຳເນີນທຸລະກິດນຳເຂົ້າແກັສຫຸງຕົ້ມ;
- ຄັ້ງທີສາມ ຈະຖືກປັບໃໝ ໜຶ່ງຮ້ອຍຫ້າສິບສ່ວນຮ້ອຍ (150%) ຂອງມູນຄ່າແກັສຫຸງຕົ້ມທີ່ກວດພົບ ພ້ອມທັງຈະຖືກສຶກສາອົບຮົມ, ກ່າວເຕືອນ, ເຮັດບົດບັນທຶກ ແລະ ຍົກເລີກໃບອະນຸຍາດດຳເນີນທຸລະກິດນຳເຂົ້າແກັສຫຸງຕົ້ມ.

**2. ການລະເມີດລະບຽບການ ກ່ຽວກັບການດຳເນີນທຸລະກິດຈຳໜ່າຍແກັສຫຸງຕົ້ມ**

1) ເອົາໃບອະນຸຍາດດຳເນີນທຸລະກິດຈຳໜ່າຍແກັສຫຸງຕົ້ມ ໃຫ້ບຸກຄົນອື່ນ ຈະຖືກນຳໃຊ້ມາດຕະການ ດັ່ງນີ້:
   - ຄັ້ງທີໜຶ່ງ ຈະຖືກປັບໃໝ 15,000,000 ກີບ ພ້ອມທັງຈະຖືກສຶກສາອົບຮົມ, ກ່າວເຕືອນ ແລະ ເຮັດບົດບັນທຶກ;
   - ຄັ້ງທີສອງ ຈະຖືກປັບໃໝ 20,000,000 ກີບ, ພ້ອມທັງຈະຖືກສຶກສາອົບຮົມ, ກ່າວເຕືອນ, ເຮັດບົດບັນທຶກ ແລະ ໂຈະໃບອະນຸຍາດດຳເນີນທຸລະກິດຈຳໜ່າຍແກັສຫຸງຕົ້ມ;
   - ຄັ້ງທີສາມ ຈະຖືກປັບໃໝ 30,000,000 ກີບ, ພ້ອມທັງຈະຖືກສຶກສາອົບຮົມ, ກ່າວເຕືອນ, ເຮັດບົດບັນທຶກ ແລະ ຍົກເລີກໃບອະນຸຍາດດຳເນີນທຸລະກິດຈຳໜ່າຍແກັສຫຸງຕົ້ມ.

2) ຈຳໜ່າຍຖັງແກັສຫຸງຕົ້ມ ທີ່ບໍ່ຕິດເຄື່ອງໝາຍການຄ້າ ຫຼື ສັນຍາລັກ, ຕິດຄອນອັດຖັງແກັສຫຸງຕົ້ມ ຫຼື ຢາງປິດຫົວວາວ ບໍລິສັດຂອງຕົນ, ຕິດສະຫຼາກເປັນພາສາລາວ, ມີຄຳແນະນຳການນຳໃຊ້, ການບຳລຸງຮັກສາ, ຄຳເຕືອນ, ຂໍ້ຄວນລະວັງທາງດ້ານຄວາມປອດໄພ, ລະບຸຊະນິດ ແລະ ສ່ວນປະກອບຂອງແກັສຫຸງຕົ້ມ ຈະຖືກນຳໃຊ້ມາດຕະການ ດັ່ງນີ້:
   - ຄັ້ງທີໜຶ່ງ ຈະຖືກປັບໃໝ 20,000,000 ກີບ ພ້ອມທັງຈະຖືກສຶກສາອົບຮົມ, ກ່າວເຕືອນ ແລະ ເຮັດບົດບັນທຶກ;
   - ຄັ້ງທີສອງ ຈະຖືກປັບໃໝ 40,000,000 ກີບ, ພ້ອມທັງຈະຖືກສຶກສາອົບຮົມ, ກ່າວເຕືອນ, ເຮັດບົດບັນທຶກ ແລະ ໂຈະໃບອະນຸຍາດດຳເນີນທຸລະກິດຈຳໜ່າຍແກັສຫຸງຕົ້ມ;
   - ຄັ້ງທີສາມ ຈະຖືກປັບໃໝ 60,000,000 ກີບ, ພ້ອມທັງຈະຖືກສຶກສາອົບຮົມ, ກ່າວເຕືອນ, ເຮັດບົດບັນທຶກ ແລະ ຍົກເລີກໃບອະນຸຍາດດຳເນີນທຸລະກິດຈຳໜ່າຍແກັສຫຸງຕົ້ມ.

3) ຊື້ແກ໊ສຫຸງຕົ້ມນຳບໍລິສັດນຳເຂົ້າ ທີ່ຕົນບໍ່ໄດ້ເປັນຕົວແທນ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກນຳໃຊ້ມາດຕະການ ດັ່ງນີ້:
- ຄັ້ງທີໜຶ່ງ ຈະຖືກປັບໃໝ 15,000,000 ກີບ ພ້ອມທັງຈະຖືກສຶກສາອົບຮົມ, ກ່າວເຕືອນ ແລະ ເຮັດບົດບັນທຶກ;
- ຄັ້ງທີສອງ ຈະຖືກປັບໃໝ 20,000,000 ກີບ, ພ້ອມທັງຈະຖືກສຶກສາອົບຮົມ, ກ່າວເຕືອນ, ເຮັດບົດບັນທຶກ ແລະ ໂຈະໃບອະນຸຍາດດຳເນີນທຸລະກິດຈຳໜ່າຍແກ໊ສຫຸງຕົ້ມ;
- ຄັ້ງທີສາມ ຈະຖືກປັບໃໝ 30,000,000 ກີບ, ພ້ອມທັງຈະຖືກສຶກສາອົບຮົມ, ກ່າວເຕືອນ, ເຮັດບົດບັນທຶກ ແລະ ຍົກເລີກໃບອະນຸຍາດດຳເນີນທຸລະກິດຈຳໜ່າຍແກ໊ສຫຸງຕົ້ມ.

4) ຈຳໜ່າຍແກ໊ສຫຸງຕົ້ມໂດຍບໍ່ຖືກຕ້ອງຕາມລາຄາແກ໊ສຫຸງຕົ້ມທີ່ລັດກຳນົດ ຈະຖືກນຳໃຊ້ມາດຕະການ ດັ່ງນີ້:
- ຄັ້ງທີໜຶ່ງ ຈະຖືກປັບໃໝ 10,000,000 ກີບ ພ້ອມທັງຈະຖືກສຶກສາອົບຮົມ, ກ່າວເຕືອນ ແລະ ເຮັດບົດບັນທຶກ;
- ຄັ້ງທີສອງ ຈະຖືກປັບໃໝ 20,000,000 ກີບ, ພ້ອມທັງຈະຖືກສຶກສາອົບຮົມ, ກ່າວເຕືອນ, ເຮັດບົດບັນທຶກ ແລະ ໂຈະໃບອະນຸຍາດດຳເນີນທຸລະກິດຈຳໜ່າຍແກ໊ສຫຸງຕົ້ມ;
- ຄັ້ງທີສາມ ຈະຖືກປັບໃໝ 30,000,000 ກີບ, ພ້ອມທັງຈະຖືກສຶກສາອົບຮົມ, ກ່າວເຕືອນ, ເຮັດບົດບັນທຶກ ແລະ ຍົກເລີກໃບອະນຸຍາດດຳເນີນທຸລະກິດຈຳໜ່າຍແກ໊ສຫຸງຕົ້ມ.

5) ຮັບ ແລະ ຂາຍແກ໊ສຫຸງຕົ້ມ ຂອງບໍລິສັດອື່ນ ທີ່ຕົນບໍ່ມີສັນຍາຊື້-ຂາຍ ຈະຖືກນຳໃຊ້ມາດຕະການ ດັ່ງນີ້:
- ຄັ້ງທີໜຶ່ງ ຈະຖືກປັບໃໝ 15,000,000 ກີບ ພ້ອມທັງຈະຖືກສຶກສາອົບຮົມ, ກ່າວເຕືອນ ແລະ ເຮັດບົດບັນທຶກ;
- ຄັ້ງທີສອງ ຈະຖືກປັບໃໝ 20,000,000 ກີບ, ພ້ອມທັງຈະຖືກສຶກສາອົບຮົມ, ກ່າວເຕືອນ, ເຮັດບົດບັນທຶກ ແລະ ໂຈະໃບອະນຸຍາດດຳເນີນທຸລະກິດຈຳໜ່າຍແກ໊ສຫຸງຕົ້ມ;
- ຄັ້ງທີສາມ ຈະຖືກປັບໃໝ 30,000,000 ກີບ, ພ້ອມທັງຈະຖືກສຶກສາອົບຮົມ, ກ່າວເຕືອນ, ເຮັດບົດບັນທຶກ ແລະ ຍົກເລີກໃບອະນຸຍາດດຳເນີນທຸລະກິດຈຳໜ່າຍແກ໊ສຫຸງຕົ້ມ.

6) ອັດຖ່າຍແກ໊ສຫຸງຕົ້ມ ລະຫວ່າງ ຖັງຕໍ່ຖັງ ຫຼື ຈາກຖັງໄປຍັງສິ່ງບັນຈຸອື່ນ ຈະຖືກນຳໃຊ້ມາດຕະການ ດັ່ງນີ້:
- ຄັ້ງທີໜຶ່ງ ຈະຖືກປັບໃໝ 30,000,000 ກີບ ພ້ອມທັງຈະຖືກສຶກສາອົບຮົມ, ກ່າວເຕືອນ ແລະ ເຮັດບົດບັນທຶກ;
- ຄັ້ງທີສອງ ຈະຖືກປັບໃໝ 50,000,000 ກີບ, ພ້ອມທັງຈະຖືກສຶກສາອົບຮົມ, ກ່າວເຕືອນ, ເຮັດບົດບັນທຶກ ແລະ ໂຈະໃບອະນຸຍາດດຳເນີນທຸລະກິດຈຳໜ່າຍແກ໊ສຫຸງຕົ້ມ;
- ຄັ້ງທີສາມ ຈະຖືກປັບໃໝ 70,000,000 ກີບ, ພ້ອມທັງຈະຖືກສຶກສາອົບຮົມ, ກ່າວເຕືອນ, ເຮັດບົດບັນທຶກ ແລະ ຍົກເລີກໃບອະນຸຍາດດຳເນີນທຸລະກິດຈຳໜ່າຍແກ໊ສຫຸງຕົ້ມ.

7) ຈຳໜ່າຍແກ໊ສຫຸງຕົ້ມ ປະປົນກັບສິນຄ້າອື່ນ ທີ່ອາດເປັນສາເຫດກໍ່ໃຫ້ເກີດອັກຄີໄພ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກນຳໃຊ້ມາດຕະການ ດັ່ງນີ້:
- ຄັ້ງທີໜຶ່ງ ຈະຖືກປັບໃໝ 20,000,000 ກີບ ພ້ອມທັງຈະຖືກສຶກສາອົບຮົມ, ກ່າວເຕືອນ ແລະ ເຮັດບົດບັນທຶກ;

- ຄັ້ງທີສອງ ຈະຖືກປັບໃໝ 40,000,000 ກີບ, ພ້ອມທັງຈະຖືກສຶກສາອົບຮົມ, ກ່າວເຕືອນ, ເຮັດບົດບັນທຶກ ແລະ ໂຈະໃບອະນຸຍາດດຳເນີນທຸລະກິດຈຳໜ່າຍແກ໊ສຫຸງຕົ້ມ;
- ຄັ້ງທີສາມ ຈະຖືກປັບໃໝ 60,000,000 ກີບ, ພ້ອມທັງຈະຖືກສຶກສາອົບຮົມ, ກ່າວເຕືອນ, ເຮັດບົດບັນທຶກ ແລະ ຍົກເລີກໃບອະນຸຍາດດຳເນີນທຸລະກິດຈຳໜ່າຍແກ໊ສຫຸງຕົ້ມ.

## ໝວດທີ 10
## ການຊຳລະ, ການຄຸ້ມຄອງ ແລະ ນຳໃຊ້ເງິນປັບໃໝ

**ມາດຕາ 34 ການຊຳລະເງິນປັບໃໝ**

ເງິນທີ່ໄດ້ຈາກການປັບໃໝຜູ້ລະເມີດລະບຽບການ ກ່ຽວກັບການດຳເນີນທຸລະກິດນຳເຂົ້າ ແລະ ຈຳໜ່າຍແກ໊ສຫຸງຕົ້ມ ຕ້ອງຊຳລະເງິນປັບໃໝຕາມບົດບັນທຶກການລະເມີດ ທີ່ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້ ໂດຍຊຳລະຜ່ານບັນຊີຂອງຂະແໜງອຸດສາຫະກຳ ແລະ ການຄ້າ.

**ມາດຕາ 35 ການນຳໃຊ້ເງິນຈາກການປັບໃໝ**

ເງິນທີ່ໄດ້ຈາກການປັບໃໝຕາມຂໍ້ຕົກລົງສະບັບນີ້ ຫົກສິບສ່ວນຮ້ອຍ (60%) ມອບເຂົ້າງົບປະມານແຫ່ງລັດ ສ່ວນເງິນທີ່ເຫຼືອ ສີ່ສິບສ່ວນຮ້ອຍ (40%) ໃຫ້ຈັດເປັນລາຍຮັບ-ລາຍຈ່າຍວິຊາການ ແລະ ຂຶ້ນແຜນການນຳໃຊ້ງົບປະມານ ເພື່ອນຳໃຊ້ບໍລິຫານວຽກງານ ຕາມທີ່ກຳນົດໄວ້ໃນມາດຕາ 36 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 36 ເປົ້າໝາຍການນຳໃຊ້ເງິນຈາກການປັບໃໝ**

ເງິນທີ່ໄດ້ຈາກການປັບໃໝ ການດຳເນີນກິດຈະການທຸລະກິດແກ໊ສຫຸງຕົ້ມ ທີ່ຈັດເປັນລາຍຮັບ-ລາຍຈ່າຍວິຊາການນຳໃຊ້ເຂົ້າໃນວຽກງານດັ່ງນີ້:

1. ການລົງຕິດຕາມ ແລະ ກວດກາການຈັດຕັ້ງປະຕິບັດວຽກງານຄຸ້ມຄອງທຸລະກິດແກ໊ສຫຸງຕົ້ມ ລວມທັງວຽກງານອື່ນທີ່ຈຳເປັນ ແລະ ຮີບດ່ວນ;
2. ນຳໃຊ້ເຂົ້າວຽກງານບໍລິຫານ, ໂຄສະນາເຜີຍແຜ່ ນິຕິກຳ, ປຶ້ມຄູ່ມື, ຈັດຝຶກອົບຮົມ ດ້ານວິຊາການກ່ຽວກັບການຄຸ້ມຄອງວຽກງານທຸລະກິດແກ໊ສຫຸງຕົ້ມ;
3. ການຈັດຊື້ວັດຖຸປະກອນ ແລະ ສິ່ງອຳນວຍຄວາມສະດວກ ເພື່ອຮັບໃຊ້ໃນການຈັດຕັ້ງປະຕິບັດວຽກງານຄຸ້ມຄອງທຸລະກິດແກ໊ສຫຸງຕົ້ມ;
4. ນຳໃຊ້ເຂົ້າໃນວຽກງານອື່ນ ກ່ຽວກັບວຽກງານຄຸ້ມຄອງທຸລະກິດແກ໊ສຫຸງຕົ້ມ.

## ໝວດທີ 11
## ບົດບັນຍັດສຸດທ້າຍ

**ມາດຕາ 37 ການຈັດຕັ້ງປະຕິບັດ**

ມອບໃຫ້ກົມການຄ້າພາຍໃນ ເປັນເຈົ້າການປະສານສົມທົບກັບ ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ, ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ແລະ ພາກສ່ວນກ່ຽວຂ້ອງເຜີຍແຜ່ແນະນຳ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ.

**ມາດຕາ 38 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດພາຍຫຼັງລົງລາຍເຊັນ ສີ່ສິບຫ້າວັນ ແລະ ໄດ້ລົງໃນຈົດໝາຍເຫດທາງລັດຖະການເປັນຕົ້ນໄປ.

ຂໍ້ຕົກລົງສະບັບນີ້ ປ່ຽນແທນຂໍ້ກຳນົດ ວ່າດ້ວຍການຄຸ້ມຄອງການນຳເຂົ້າ ແລະ ຈຳໜ່າຍແກັສຫຸງຕົ້ມ ສະບັບເລກທີ 0756/ກຄ.ພນ, ລົງວັນທີ 20 ມິຖຸນາ 2001.

ກົມການຄ້າພາຍໃນ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ກວດຄືນ ແລະ ແຈ້ງການເປັນລາຍລັກອັກສອນ ໃຫ້ບັນດາທຸລະກິດແກັສຫຸງຕົ້ມ ທີ່ໄດ້ຮັບອະນຸຍາດດຳເນີນທຸລະກິດກ່ອນ ຂໍ້ຕົກລົງສະບັບນີ້ ຕ້ອງປັບປຸງທຸລະກິດຂອງຕົນ ໃຫ້ຖືກຕ້ອງສອດຄ່ອງຕາມເງື່ອນໄຂ ທີ່ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້ ພາຍໃນສອງປີ ນັບແຕ່ວັນທີ່ໄດ້ຮັບແຈ້ງການເປັນຕົ້ນໄປ.

ສຳລັບ ການສ້າງຕັ້ງ ແລະ ດຳເນີນທຸລະກິດແກັສຫຸງຕົ້ມ ທີ່ໄດ້ຮັບອະນຸຍາດໃນເຂດເສດຖະກິດພິເສດ ຫຼື ເຂດເສດຖະກິດສະເພາະກ່ອນ ຂໍ້ຕົກລົງສະບັບນີ້ ໃຫ້ສະໜອງເອກະສານທີ່ກ່ຽວຂ້ອງ ເຊັ່ນ: ສຳເນົາໃບທະບຽນວິສາຫະກິດ, ໃບອະນຸຍາດດຳເນີນດຳທຸລະກິດ, ໃບຢັ້ງຢືນຄວາມຖືກຕ້ອງສາງແກັສຫຸງຕົ້ມ ແລະ ອື່ນ ໃຫ້ຂະແໜງອຸດສາຫະກຳແລະການຄ້າ ຕາມການແບ່ງຂັ້ນຄຸ້ມຄອງ ພາຍໃນ ເກົ້າສິບວັນ ພາຍຫຼັງທີ່ຂໍ້ຕົກລົງສະບັບນີ້ມີຜົນສັກສິດ.

**ລັດຖະມົນຕີ**

ກະຊວງອຸດສາຫະກຳ ແລະ ການຄ້າ

ລັດຖະມົນຕີ

ມະໄລທອງ ກົມມະສິດ